ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 1876/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 23 ສິງຫາ 2019

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ
ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວຈຳກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2019.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາ ບໍລິຫານສະໄໝສາມັນ ຄັ້ງທີ 3/2019 ວັນທີ 22 ສິງຫາ 2019, ດັ່ງມີລາຍລະອຽດລຸ່ມນີ້:

1. ຮັບຮອງບົດລາຍງານການດຳເນີນທຸລະກິດລວມທັງລາຍງານການເງິນ ຂອງບໍລິສັດ 6 ເດືອນຕົ້ນປີ 2019 (01/01/2019-30/06/2019) ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ມີການທົບທວນແລ້ວ ແລະ ໃຫ້ນຳ ເລື່ອງນີ້ ລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເພື່ອຊາບ.
2. ອະນຸມັດບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ຜ-ຟຟລ 06 ເດືອນຕົ້ນປີ 2019 (01/01/2019-30/06/2019) ທີ່ຂາດທຶນເປັນຈຳນວນເງິນ 147,15 ຕື້ກີບ ອັນເປັນຜົນສືບເນື່ອງມາຈາກ ປັດໃຈຫຼັກ ຄືການຂາດທຶນອັດຕາແລກປ່ຽນ (ສາເຫດການອ່ອນຄ່າລົງຂອງເງິນກີບເມື່ອທຽບໃສ່ສະກຸນເງິນ ບາດ ແລະ ສະກຸນເງິນໂດລາສະຫະລັດ) ແລະ ໃຫ້ນຳເລື່ອງນີ້ລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ເພື່ອຮັບຮອງ.
3. ຮັບຮອງການແຕ່ງຕັ້ງ ທ່ານ ບົວວັນ ຈັນສະຫວັດ ເປັນຜູ້ອຳນວຍການ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ EDL-Gen O&M ຈຳກັດ ເພື່ອປ່ຽນແທນຜູ້ອຳນວຍການຜູ້ເກົ່າທີ່ໄດ້ເຂົ້າບຳເນັດແລ້ວ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,
ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່

ພະລັງງານ ແລະ ບໍ່ແຮ່ ກະຊວງ
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company
ນະຄອນຫຼວງ ວຽງຈັນ

ລັດຕະນາ ປະທຸມວັນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕຸ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la